ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມເຜີຍແຜ່ ທິດທາງການຄຸ້ມຄອງວຽກງານສິນເຊື່ອຂອງ ສປປ ລາວ ຮອດປີ 2030



ໃນວັນທີ 05 ພຶດສະພາ 2026 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ຈັດກອງປະຊຸມເຜີຍແຜ່ ທິດທາງການຄຸ້ມຄອງວຽກງານສິນເຊື່ອຂອງ ສປປ ລາວ ຮອດປີ 2030 ຂຶ້ນ ໂດຍການເປັນປະທານຂອງ ທ່ານ ອາລຸນ ບຸນຍົງ ຮອງຜູ້ວ່າການ ທຫລ, ມີບັນດາຄະນະກົມພາຍໃນ ທຫລ, ຕາງໜ້າຈາກ ກະຊວງ, ທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຈຳນວນ 129 ທ່ານ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້ ເພື່ອເປັນການສ້າງຮູ້ຄວາມເຂົ້າໃຈ ລະຫວ່າງ ຜູ້ຄຸ້ມຄອງນະໂຍບາຍສິນເຊື່ອ ກໍ່ຄື ທຫລ ກັບ ສະຖາບັນການເງິນທີ່ໃຫ້ບໍລິການສິນເຊື່ອຕົວຈິງ, ລວມທັງບັນດາອົງການຈັດຕັ້ງລັດ ແລະ ນິຕິບຸກຄົນອື່ນໆ ທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດ ທິດທາງການຄຸ້ມຄອງນະໂຍບາຍສິນເຊື່ອຂອງ ສປປ ລາວ ຮອດປີ 2030 ທີ່ໄດ້ກຳນົດວິໄສທັດ ແລະ ແຜນການຈັດຕັ້ງປະຕິບັດຂອງ ທຫລ ໃນໄລຍະ 5 ປີຕໍ່ໜ້າ (2026-2030) ຄື : (1) ການສ້າງ ແລະ ພັດທະນາພື້ນຖານໂຄງລ່າງດ້ານຂໍ້ມູນສິນເຊື່ອ; (2) ການສ້າງ ແລະ ພັດທະນາເຄື່ອງມືຄຸ້ມຄອງ, ຕິດຕາມ ແລະ ປະເມີນຄວາມສ່ຽງດ້ານສິນເຊື່ອ; (3) ການແກ້ໄຂໜີ້ບໍ່ເກີດດອກອອກຜົນ (NPLs) ແລະ ສະພາບໜີ້ໃນລະບົບທະນາຄານ; (4) ການສະໜອງສິນເຊື່ອທີ່ມີປະສິດທິພາບ ເພື່ອຄວາມຍືນຍົງ, ສົ່ງ ເສີມສະກຸນເງິນພາຍໃນ ແລະ ໃຫ້ສອດຄ່ອງຕາມຂະແໜງການຈຸດສຸມຂອງເສດຖະກິດແຕ່ລະໄລຍະ; (5) ການຍົກສູງບົດບາດການບໍລິຫານຄຸ້ມຄອງສິນເຊື່ອຂອງທະນາຄານທຸລະກິດ; (6) ການສ້າງ ແລະ

ພັດທະນາຜະລິດຕະພັນສິນເຊື່ອໃຫ້ມີຄວາມຫຼາກຫຼາຍ, ທັນສະໄໝ ແລະ ສາມາດເຂົ້າເຖິງແຫຼ່ງທຶນໄດ້ ລວມທັງການພັດທະນາຕະຫຼາດທຶນ ໃຫ້ເປັນຊ່ອງທາງການລະດົມທຶນໄລຍະຍາວຂອງທະນາຄານທຸລະກິດ.



ກອງປະຊຸມດັ່ງກ່າວ ດຳເນີນໄປເປັນເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເຮັດໃຫ້ກອງປະຊຸມສຳເລັດລົງ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.



ຂ່າວ-ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ